## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 30 ພຶສພາ 2021 (05-30-2021)

---

## ວາງໃຈພຣະເຈົ້າທຳງານ

*ມີຫຍັງແດ່ທີ່ທ່ານເຮັດສຳເຣັດຕາມແຜນໃນລາຍການທີ່ຈະເຮັດຂອງທ່ານ?*

**ຈຸດສຳຄັນໃນບົດຮຽນ:** ແບ່ງປັນພຣະຄຣິດໃນທຸກສະຖານະການ, ແຕ່ມອບຜົນຮັບໄວ້ກັບພຣະເຈົ້າ.

### ພຣະຄັມພີຕອບສນອງຕໍ່ຊີວິດ:

ແຜນລາຍການວຽກງານທີ່ຈະເຮັດ (Bucket lists). ລາຍການກິຈກຳຫຼືວຽກທີ່ຄົນຢາກເຮັດໃຫ້ສຳເຣັດກ່ອນຕາຍ. ປຶ້ມແລະບລັອກທີ່ເຕັມໄປດ້ວຍແນວຄິດເຊັ່ນ: ສະຖານທີ່ຮ້ອຍແຫ່ງທີ່ຈະໄປທ່ຽວຊົມກ່ອນຕາຍ. ປຶ້ມຮ້ອຍຫົວທີ່ທ່ານຕ້ອງອ່ານກ່ອນຕາຍ. ໜັງຮ້ອຍເຣື່ອງ....ທ່ານກໍຄິດອອກແລ້ວລະນໍ. ບາງຄົນເຮັດບັນຊີຫຼິ້ນມ່ວນ, ແຕ່ບາງຄົນພັດເອົາຈິງເອົາຈັງກັບມັນ.

ມີໜ້ອຍຄົນສຳເຣັດລາຍການວຽກຂອງເຂົາ ນອກຈາກວ່າລາຍການວຽກນັ້ນປະກອບດ້ວຍ "ໝາກທີ່ຫ້ອຍຢູ່ຕ່ຳ" (Low hanging fruits)-ສິ່ງເຫຼົ່ານັ້ນເຮັດໃຫ້ສຳເຣັດໄດ້ງ່າຍ. ເຖິງແມ່ນວ່າຄົນຈະເຮັດໄດ້ສຳເຣັດຄົບຖ້ວນຫຼືບໍ່ກໍຕາມ, ບາງທີພວກເຂົາໄດ້ຮັບຄຳສັ່ງໃຫ້ພຍາຍາມເຮັດໃຫ້ສຳເຣັດ. ສິ່ງທີ່ຄວນມີໃນແຜນລາຍການວຽກຂອງຜູ້ຕິດຕາມພຣະຄຣິດແມ່ນນຳຄົນມາເຊື່ອໃນພຣະຄຣິດ. ໜ້າທີ່ນີ້ບໍ່ພຽງແຕ່ເປັນຜົນດີຕໍ່ຊີວິດ "ກ່ອນຕາຍ" ເທົ່ານັ້ນ, ມັນຍັງຈະເປັນຜົນດີຕໍ່ຊີວິດນິຣັນອີກດ້ວຍ. ໜ້າເສັຽດາຍ ເຖິງແມ່ນວ່າເຮົາອາດໄດ້ເຮັດໜ້າທີ່ຂອງເຮົາແລ້ວ, ພວກເຮົາກໍບໍ່ສາມາດເຮັດໃຫ້ສຳເຣັດສເມີ. ອາດເວົ້າໄດ້ວ່າ ເຮົາພຽງແຕ່ໄດ້ແບ່ງປັນຄວາມເວົ້າ ບໍ່ໄດ້ໝາຍຄວາມວ່າຄົນຜູ້ນັ້ນຈະຮັບເອົາພຣະຄຣິດໂລດ. ມັດທາຍ ບົດ13 ຈະຊ່ອຍເຮົາເຫັນຜົນສຳເຣັດຄົບຖ້ວນຂອງໜ້າທີ່ນັ້ນ ແມ່ນສິ່ງນຶ່ງທີ່ເຮົາວາງໄວ້ໃນພຣະຫັດພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ມັດທາຍ 13:3-8</u>.**

*3. ແລ້ວພຣະອົງຊົງກ່າວກັບເຂົາຫຼາຍປະການເປັນຄຳອຸປມາວ່າ, "ເບິ່ງແມ, ມີຄົນນຶ່ງອອກໄປຫວ່ານພືດ. 4. ເມື່ອ*
*ກຳລັງຫວ່ານຢູ່ນັ້ນລາງເມັດກໍຕົກຕາມທາງ ແລ້ວນົກກໍມາກິນເສັຽ. 5. ລາງເມັດກໍຕົກໃສ່ບ່ອນຫີນຫຼາຍດິນໜ້ອຍ ຈຶ່ງ*
*ງອກຂຶ້ນໂລດເພາະດິນບໍ່ເລິກ. 6. ແຕ່ເມື່ອຕາເວັນອອກມາກໍແຫ້ນ ຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ. 7. ລາງເມັດກໍ*
*ຕົກກາງພຸ່ມໜາມ ໜາມກໍປົ່ງຂຶ້ນຫຸ້ມຮັດເສັຽ. 8. ລາງເມັດກໍຕົກໃສ່ດິນດີແລ້ວກໍເກີດຜົນເມັດນຶ່ງຮ້ອຍຕໍ່, ເມັດນຶ່ງຫົກ*
*ສິບຕໍ່, ເມັດນຶ່ງສາມສິບຕໍ່.*

ພຣະເຢຊູເຄີຍສັ່ງສອນເປັນຄຳອຸປມາສເມີ, ເພື່ອໂນ້ມນ້າວຜູ້ຟັງໃຫ້ຕັ້ງໃຈຟັງພຣະທັມທີ່ພຣະອົງເລືອກມາ, ສັນຫາຄຳປຽບທຽບລຽບງ່າຍໃຫ້ຟັງ, ແຕ່ບາງຄັ້ງກໍເຊື່ອງສົ້ນໄວ້. ຄຳອຸປມາຂອງພຣະອົງມັກຈະພົວພັນກັບວັທນາທັມທີ່ມີພິທີກັມ

ແບບດຽວກັນສເມີ, ແລະໃຊ້ມັດຈິດໃຈຄົນທີ່ພຣະອົງພົບປະນັ້ນ. ສິ່ງທີ່ພຣະອົງສັ່ງສອນອາດຈະເຮັດໃຫ້ຫຼາຍຄົນໃນບັນດາຜູ້ຟັງສັບສົນ ອັນເນື່ອງມາຈາກໃຈແຂງກະດ້າງ ແລະບໍ່ຍອມຮັບຂອງເຂົາ.

ມັນເປັນການຍາກສຳລັບຄົນຟັງຍຸກໃໝ່ຈະເຂົ້າໃຈ ເພາະເຫດນີ້ ພຣະເຢຊູຈຶ່ງເລືອກສັ່ງສອນສິ່ງສຳຄັນນີ້ເປັນຄຳອຸປມາແທນທີ່ຈະອະທິບາຍສິ່ງທີ່ພຣະອົງໝາຍເຖິງໂລດ. ຄົນສມັຍນີ້ເອີ້ນວ່າຄຳອຸປມາລຶກລັບ, ສ່ວນຄົນສມັຍພຣະເຢຊູເຂົາລຶ້ງກັບວິທີທາງທີ່ພຣະອົງສື່ສານມາແລ້ວ. ຫົວຄິດຄົນສມັຍໃໝ່ ຫາເຫດຜົນໂດຍທາງ ຂໍ້ມູນ (lists) ແລະຕົວເລກ (logic), ສ່ວນແນວຄິດຂອງຄົນຢິວໃນເວລານັ້ນ ນຶກເປັນພາບແລະຕົວຢ່າງ. ຄຳອຸປມາບໍ່ໄດ້ປົກປິດຄວາມຈິງ; ຫຼັກຄຳສອນໃນຄຳອຸປມາ "ບັງລັບສະເພາະສາຍຕາຜິວເຜີນ" ໃນທາງຊຶ່ງ ຜູ້ທີ່ເຂົ້າໃຈສິ່ງທີ່ພຣະອົງກ່າວຈະເຂົ້າໃຈຖືກຕ້ອງກັບສິ່ງທີ່ພຣະອົງໄດ້ກ່າວ.

ໃນຄຳອຸປມານີ້, ພຣະເຢຊູໃຊ້ຮູບພາບເມັດພືດແລະດິນ ຊຶ່ງແຕ່ລະປະເພດໝາຍເຖິງຄົນແລະວິທີທີ່ເຂົາໄດ້ຮັບຄວາມຈິງ. ເຮົາຈະໄດ້ເຫັນໃນຕອນຕໍ່ໄປວ່າດິນແຕກຕ່າງກັນ ປຽບກັບການຕອບສນອງຕໍ່ຂ່າວປະເສີດທີ່ຕ່າງກັນຢ່າງໃດ, ແຕ່ໃຫ້ເຮົາເຈາະຈົງໃສ່ສິ່ງທີ່ຜູ້ຫວ່ານເຮັດ: ເພິ່ນຫວ່ານເມັດພືດ. ເພິ່ນບໍ່ໄດ້ຕັດສິນດິນລ່ວງໜ້າ; ເພິ່ນຫວ່ານເມັດຢ່າງເສຣີ.

*ເປັນຫຍັງຈຶ່ງສຳຄັນໃນການແບ່ງປັນຂ່າວປະເສີດໃຫ້ກວ້າງເທົ່າທີ່ຈະກວ້າງໄດ້?*

ພຣະເຢຊູຊົງເປັນແບບຢ່າງຜູ້ຫວ່ານພືດແນ່ນອນ! ພຣະອົງສວຍເອົາທຸກໂອກາດຢູ່ຕໍ່ໜ້າພຣະອົງ. ພຣະເຢຊູໄດ້ມີການສົນທະນາສ່ວນຕົວກັບຜູ້ນຳສາສນາເຊັ່ນນີໂກເດມແລະກັບຄົນບາບສາທາຣະນະເຊັ່ນຍິງທີ່ນ້ຳສ້າງ. ພຣະອົງຍັງມີຫຼາຍໂອກາດດັ່ງທີ່ເຮົາເຫັນໃນມັດທາຍບົດ 13, ເວລາພຣະອົງກ່າວຕໍ່ຝູງຊົນ. ຫຼາຍໆຄັ້ງ ຝູງຊົນໄດ້ມາຫາພຣະອົງເພື່ອປິ່ນປົວພຍາດຫຼືຮັບອາຫານ, ແຕ່ ບໍ່ວ່າການເຄື່ອນໄຫວຈະເປັນຮູບການໃດ, ພຣະເຢຊູກໍໄດ້ສວຍໃຊ້ໂອກາດຫວ່ານແລະສອນເຂົາ.

ພຣະເຢຊູໄດ້ວາງແບບຢ່າງໄວ້ໃຫ້ເຮົາເຮັດຕາມ. ພວກເຮົາສາມາດສວຍເອົາໂອກາດຕໍ່ໜ້າເຮົາຮີບດ່ວນແລະຕັ້ງໃຈວ່າຈະແບ່ງປັນເວລາໃດແລະຢ່າງໃດ. ການເຮັ່ງຮີບຂອງລວມມີການອະທິຖານ: ການອະທິຖານເພື່ອເປີດຕາໃຫ້ເຫັນໂອກາດທີ່ພຣະເຈົ້າໄດ້ປະທານແກ່ເຮົາ, ອະທິຖານວ່າເຮົາຈະ "ຫວ່ານເມັດ" ແນວໃດ, ແລະອະທິຖານເພື່ອຜູ້ທີ່ເຮົາຈະແບ່ງປັນ. ບໍ່ວ່າເຮົາຈະຢູ່ບ່ອນໃດ ພວກເຮົາຄວນອະທິຖານແຕ່ລະວັນແລະຄາດຫວັງວ່າພຣະເຈົ້າຈະປະທານໂອກາດໃຫ້ເຮົາເປັນຜູ້ສື່ຂ່າວຂອງພຣະອົງ. ແຕ່ວ່າ ພວກເຮົາບໍ່ສາມາດຄວບຄຸມການຕອບສນອງຂອງຜູ້ອື່ນ ຕໍ່ສິ່ງທີ່ເຂົາໄດ້ຍິນ, ເປົ້າໝາຍໃຫຍ່ແລະປັດຈັຍສຳຄັນແມ່ນ ເຂົາໄດ້ຍິນຂ່າວປະເສີດ.

## 2. <u>ມັດທາຍ 13:18-22</u>.

*18. "ເຫດສັນນັ້ນທ່ານທັງຫຼາຍຈົ່ງຟັງຄຳອຸປມາເຣື່ອງຜູ້ຫວ່ານພືດນັ້ນ. 19. ເມື່ອຜູ້ໃດໄດ້ຍິນພຣະທັມເຣື່ອງຣາຊອານາຈັກນັ້ນ ແຕ່ບໍ່ເຂົ້າໃຈ ມານຮ້າຍມາຍາດເອົາເມັດທີ່ຫວ່ານໃນໃຈຄົນນັ້ນໄປເສັຽ ນັ້ນແຫຼະ, ໄດ້ແກ່ເມັດທີ່ຫວ່ານລົງຕາມທາງ. 20. ແລະເມັດທີ່ຫວ່ານຕົກໃນບ່ອນມີຫີນຫຼາຍນັ້ນ ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທັມ ແລ້ວກໍຮັບເອົາທັນທີ-ດ້ວຍຄວາມຍິນດີ. 21. ແຕ່ບໍ່ມີຮາກໃນຕົວເອງຈຶ່ງທົນຢູ່ຊົ່ວຄາວ ແລະເມື່ອເກີດຄວາມຍາກລຳບາກ ຫຼືການຂົ່ມເຫັງ-ເພາະພຣະທັມນັ້ນ ຕົນກໍທໍ້ຖອຍໃຈເສັຽທັນທີ. 22. ແລະເມັດທີ່ຫວ່ານຕົກກາງພຸ່ມໜາມ ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທັມ ແລ້ວຄວາມກັງວົນຕາມທັມມະດາໂລກ ແລະຄວາມຫຼອກລວງແຫ່ງຊັບສົມບັດ ກໍຫຸ້ມຮັດພຣະທັມນັ້ນເສັຽຈຶ່ງບໍ່ເກີດຜົນ.*

ຖານະຜູ້ເຊື່ອ, ພວກເຮົາຫວັງວ່າເມື່ອເຮົາແບ່ງປັນຂ່າວປະເສີດ, ທຸກຄົນທີ່ໄດ້ຍິນຈະຮັບເອົາຂ່າວນັ້ນ. ແຕ່ໜ້າເສັຽ

ດາຍ, ບໍ່ແມ່ນທຸກຄົນຈະພ້ອມໃຈຮັບເອົາຂ່າວທີ່ເຮົາແບ່ງປັນນັ້ນ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ຄວນເລີກແບ່ງປັນຂ່າວປະເສີດແຫ່ງຄວາມຫວັງນີ້. ພຣະເຢຊູບໍ່ໄດ້ລົ້ມເລີກແນ່ນອນ. ພຣະເຈົ້າອາສັຍເຮົາຫວ່ານເມັດຂ່າວປະເສີດບໍ່ວ່າຜູ້ຟັງຈະຕອບສນອງຢ່າງໃດກໍຕາມ. ໃນຄໍາອຸປມາຂອງພຣະເຢຊູ, ດິນທີ່ແຕກຕ່າງກັນໝາຍເຖິງທາງຫຼາຍແງ່ ທີ່ຄົນຕອບສນອງຕໍ່ຂ່າວປະເສີດແລະຄວາມຈິງຂອງພຣະຄັມພີ.

- **ດິນແຂງ.** ດິນປະເພດທີ່ນຶ່ງໝາຍເຖິງຜູ້ຟັງພຣະທັມທີ່ມີໃຈແຂງກະດ້າງ. ເຊັ່ນດຽວກັນກັບເມັດພືດທີ່ບໍ່ສາມາດເຂົ້າໄປໃນດິນແຂງ, ເມື່ອເມັດຄວາມຈິງຕົກໃສ່ໃຈແຂງກະດ້າງ, ມັນກໍຈະພົ້ງອອກ, ບໍ່ສາມາດຢັ່ງຮາກລົງໄດ້. ຕັກຕິກຂອງຊາຕານເປັນເຫດໃຫ້ຜູ້ຟັງເມີນເສີຍຕໍ່ຂ່າວສານ ດັ່ງດຽວກັບເມັດທີ່ຕົກຕາມທາງຢັ່ງຮາກບໍ່ໄດ້, ສະແດງວ່າບໍ່ມີຄວາມເຂົ້າໃຈ.
- **ດິນມີຫີນຫຼາຍ.** ດິນບາງຊນິດບ່ອນທີ່ພຣະເຢຊູຢູ່ເປັນດິນຕື້ນຫຼາຍ. ດິນເບິ່ງຄືວ່າເປັນດິນອຸດົມສົມບູນທາງໜ້າແຕ່ເປັນພຽງຊັ້ນດິນຕື້ນໆເທິງດານຫີນ. ດິນນີ້ ໃຫ້ເມັດເຂົ້າໄປ ແລະ ໄດ້ຮັບຄວາມອົບອຸ່ນຈາກແສງຕາເວັນ. ແຕ່ເມື່ອຮາກຢັ່ງລົງຮອດດານຫີນ, ເຂົາກໍບໍ່ມີບ່ອນໄປ. ປະກົດການທໍາອິດຂອງສະພາບອາກາດເປັນເຫດໃຫ້ເຂົາຫ່ຽວແຫ້ງ. ຄົນທີ່ເປັນດັ່ງດິນຕື້ນ ເມື່ອໄດ້ຍິນພຣະທັມກໍ "ຮັບເອົາທັນທີດ້ວຍຄວາມຍິນດີ"(ຂໍ້ 20), ແຕ່ເປັນພຽງການຮັບແລະຄວາມເຊື່ອຕື້ນໆ, ແລ້ວກໍ ທໍ້ຖອຍໃຈທັນທີ.
- **ດິນກາງພຸ່ມໜາມ.** ເມັດທີ່ຊາວນາຫວ່ານໄປ ບາງເມັດກໍເລີ່ມປົ່ງຮາກ. ລໍາຕົ້ນເບິ່ງຄືວ່າແຂງແຮງຊົ່ວລະຍະນຶ່ງ, ແລ້ວໜາມກໍມາປົກຄຸມ, ຫຸ້ມຮັດແລະສະກັດກັ້ນບໍ່ໃຫ້ໄດ້ຮັບອາຫານຈາກດິນ. ພຣະເຢຊູໃຊ້ດິນຊນິດນີ້ ເປັນຕົວຢ່າງຜູ້ໄດ້ຍິນພຣະທັມ, ແຕ່ ແທນທີ່ຈະໃຫ້ພຣະທັມນັ້ນຕັ້ງໝັ້ນໃນຊີວິດໂດຍການໄຕ່ຄວນພຣະທັມນັ້ນ, ເຂົາກັບໃຫ້ສິ່ງອື່ນຂໂມຍຈຸດສຸມໄປ: "ຄວາມກັງວົນຕາມທັມມະດາໂລກ ແລະ ຄວາມຫຼອກລວງແຫ່ງຊັບສົມບັດ ກໍຫຸ້ມຮັດພຣະທັມນັ້ນເສັຽຈຶ່ງບໍ່ເກີດຜົນ" (ຂໍ້ 22).

*ທ່ານຈະຕອບສນອງແບບໃດຕໍ່ຄົນທີ່ບໍ່ພ້ອມທີ່ຈະຟັງຂ່າວປະເສີດ?*

## 3. <u>ມັດທາຍ 13:23.</u>

*23. ສ່ວນເມັດທີ່ຫວ່ານຕົກລົງໃນດິນດີນັ້ນ ໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມແລະເຂົ້າໃຈ ຜູ້ນັ້ນກໍເກີດຜົນໄດ້ຮ້ອຍຕໍ່ແດ່, ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່."*

ດິນປະເພດທີສີ່ເປັນຕົວຢ່າງສາວົກແທ້ທີ່ໄດ້ຮັບຂ່າວປະເສີດ, ໄດ້ຮັບເອົາ, ແລະ ພາຄົນອື່ນເຕີບໃຫຍ່ໃນພຣະທັມນັ້ນ. ໃນທີ່ສຸດ, ຄວາມປາຖນາຂອງເຮົາເວລາແບ່ງປັນຂ່າວປະເສີດແມ່ນ ທຸກເມັດທີ່ເຮົາຫວ່ານ "ຈະຕ້ອງຕົກໃສ່ດິນດີ!" ເມື່ອຂ່າວປະເສີດຕົກໃສ່ດິນນີ້, ຈະເກີດຜົນຫຼາຍ. ດິນດີຈະອຸດົມສົມບູນສໍາລັບການສ້າງສາວົກ, ເພື່ອໃຫ້ຈະເຣີນເຕີບໃຫຍ່ໃນພຣະຄຣິດ, ແລະເພື່ອແບ່ງປັນພຣະອົງກັບຄົນອື່ນ.

*ເມື່ອໃດທ່ານພົບວ່າຂ່າວປະເສີດຕົກໃສ່ດິນດີ?*

ໃນຈຸດນີ້, ພວກຄົນໃນຝູງຊົນຄົງເຂົ້າໃຈ ພຣະເຢຊູອ້າງເຖິງຜູ້ຫວ່ານ, ເມັດ, ແລະດິນ. ແຕ່ບັດນີ້ ພຣະເຢຊູໄດ້ເພີ່ມສິ່ງສູງສົ່ງທີ່ບໍ່ເໝືອນເດີມ ຄື: ຜົນເກັບກ່ຽວ. ເມື່ອພິຈາຣະນາເບິ່ງສະພາບຂອງດິນໃນບ່ອນນັ້ນແລະວິທີທີ່ເຂົາຫວ່ານເມັດ, ຊາວນາຄາດຫວັງວ່າຈະໄດ້ຜົນເກັບກ່ຽວດີທີ່ສຸດເຖິງສິບຕໍ່. ແຕ່ແລ້ວປາກົດວ່າເຂົາຈະເກັບກ່ຽວໄດ້ພຽງເຈັດ ຫຼື ແປດຕໍ່ຂອງປະລິມານເມັດທີ່ເຂົາຫວ່ານ. ແຕ່ ພຣະເຢຊູໄດ້ນໍາພາເຂົາໄປເຖິງຜົນເກັບກ່ຽວຫຼາຍກວ່າສິບຕໍ່ໃນຣະດູປູກຝັງທີ່ດີ. ພຣະເຢຊູສອນວ່າ ເມັດເຫຼົ່ານີ້ພໍພຽງແຕ່ໃຫ້ຜົນເກັບກ່ຽວເທົ່ານັ້ນ, ແຕ່ ຈະໃຫ້ຜົນເກັບກ່ຽວຫຼາຍເທົ່າທະວີຄູນ

ຂອງຕົ້ນເດີມ. ເມື່ອພຣະທັມພຣະເຈົ້າຢັ່ງຮາກໃນຊີວິດຄົນຜູ້ນຶ່ງ, ພຣະອົງປະກາດວ່າ,"ຈະເກີດຜົນແລະກຳໄຣ: ຮ້ອຍຕໍ່ແດ່, ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່." ພວກເຮົາບໍ່ໄດ້ຮັບຜິດຊອບໃນການຕອບສນອງຂອງຜູ້ຟັງ. ການຮັບເອົາຄວາມຈິງຂອງບຸກຄົນນັ້ນ ຂຶ້ນກັບວ່າເຂົາເປີດໃຈຮັບພຣະທັມພຣະເຈົ້າຫຼາຍສ່ຳໃດແລະຍອມມອບຊີວິດໃຫ້ພຣະອົງ. ຖານະທູດຂອງພຣະອົງ ເຮົາບໍ່ເປັນຜູ້ເຮັດໃຫ້ກັບໃຈໃໝ່; ມີແຕ່ພຣະເຈົ້າເທົ່ານັ້ນ. ແຕ່ເວລາເຮົາຫວ່ານຂ່າວສານຂອງພຣະອົງ-ຂ່າວປະເສີດ-ເຮົາເປັນພາຫານະສຳລັບການປ່ຽນໃໝ່.

ພຣະເຢຊູເປັນຜູ້ຫວ່ານຊຶ່ງໄດ້ປະທານໂອກາດໃຫ້ເຮົາມີພາກສ່ວນກັບພຣະອົງໃນການຫວ່ານ. ພຣະອົງຄາດຫວັງໃຫ້ຄົນຂອງພຣະອົງສືບຕໍ່ແບ່ງປັນຂ່າວປະເສີດບໍ່ວ່າຈະເປັນຈັ່ງໃດ, ເຖິງປານນັ້ນ ເຮົາກໍສາມາດແນ່ໃຈ ບໍ່ວ່າຈະເປັນດິນຊນິດໃດທີ່ເມັດອາດຕົກໃສ່. ເປົ້າໝາຍຂອງການຫວ່ານແມ່ນເພື່ອຄົນຈະໄດ້ຍິນຂ່າວສານ ຫຼາຍເທົ່າທີ່ຈະຫຼາຍໄດ້. ເຮົາຫວ່ານພຣະທັມພຣະເຈົ້າລົງໃນຊີວິດຂອງຜູ້ອື່ນແລະມອບຜົນຮັບໄວ້ໃນພຣະຫັດພຣະອົງ.

*ຄຳອຸປມາເຣື່ອງນີ້ຈະຊ່ວຍເຮົາຊຸກຍູ້ການປະກາດຢ່າງໃດ?*

## ນຳໃຊ້ໃນຊີວິດ

ທ່ານຈະເຮັດຫຍັງເພື່ອປະກາດຂ່າວປະເສີດ? ຈົ່ງເລືອກການນຳໃຊ້ຢ່າງໃດຢ່າງນຶ່ງຕໍ່ລົງໄປນີ້:

- **ເຕີບໃຫຍ່.** ຖ້າທ່ານຖືກຈ່ອງດຶງໃຫ້ອອກນອກທາງຫຼືປະສົບຄວາມຫຍຸ້ງຍາກໃນການຍ່າງກັບພຣະຄຣິດ, ຈົ່ງໃຫ້ຄຳໝັ້ນສັນຍາໃໝ່ແກ່ພຣະອົງ. ທູນຂໍພຣະເຈົ້າທຳງານໃນຊີວິດທ່ານ ແລະ ຊ່ອຍທ່ານເກີດຜົນແດ່ພຣະອົງ.
- **ແບ່ງປັນ.** ຈົ່ງຊີ້ບອກໂອກາດທີ່ພຣະເຈົ້າປະທານແກ່ທ່ານພາຍໃນອາທິດທີ່ "ຫວ່ານເມັດ" ໃສ່ຊີວິດຂອງຄົນອື່ນ. ອະທິຖານເພື່ອຄວາມກ້າຫານແລະສວຍເອົາໂອກາດທີ່ພຣະເຈົ້າວາງໄວ້ຕໍ່ໜ້າທ່ານ.
- **ສົນໃຈ.** ຄນະທີ່ທ່ານແບ່ງປັນພຣະຄຣິດ, "ຈົ່ງແປງດິນ." ຈົ່ງເຮັດຫຼາຍກວ່າເວົ້າ; ຈົ່ງສະແດງຄວາມສົນໃຈແລະຫ່ວງໃຍ. ຈົ່ງສະແດງຄວາມຮັກໃນການກະທຳຂອງທ່ານ; ຈົ່ງໃຊ້ເວລາໃນຊີວິດບາງບຸກຄົນແລະໃຫ້ພຣະເຈົ້າໃຊ້ຄຳເວົ້າ ແລະການກະທຳຂອງທ່ານເພື່ອຕຽມດິນ.

ຂ້າພະເຈົ້າໄດ້ຮັບກ່ອງລາຍການ, ເບິ່ງຄືວ່າເຮົາຈະບໍ່ໄປເຖິງຈຸດຈົບກ່ອນຊີວິດຈະສິ້ນ. ແຕ່ຈົ່ງໃຫ້ແນ່ໃຈວ່າພວກເຮົາສືບຕໍ່ຫວ່ານເມັດຂ່າວປະເສີດແລະຮັກສາສິ່ງນີ້ກ່ອນໃນບັນຊີສິ່ງທີ່ເຮົາຈະຕໍ່ສູ້ເອົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**